ປົດຂ່າວ

Empowered lives.
Resilient nations.

# ພິທີເຊັນສັນຍາ ລະຫວ່າງ ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP) ແລະ ບໍລິສັດ ນໍ້າເທີນ 2 ຈໍາກັດ (NTPC)

***ລົງນາມໃນພິທີເຊັນສັນຍາຮ່ວມມື ລະຫວ່າງ UNDP-NTPC ໃນການປະກອບສ່ວນ ສະໜັບສະໜູນ ວິທະຍຸຊຸມຊົນ ຢູ່ເມືອງນາກາຍ ໂດຍຜ່ານການ ໂຄງການສົ່ງເສີມການມີສວ່ນຮ່ວມຂອງຊຸມຊົນ ໂດຍຜ່ານໂຄງການວິທະຍຸຊຸມຊົນ***

**ທີ່ນະຄອນຫຼວງວຽງຈັນ, ວັນທີ 03 ຕຸລາ 2019 -** ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ໄດ້ເຊັນສັນຍາຮ່ວມມື ກັບ ຄູ່ຮ່ວມງານໃໝ່ຈາກພາກເອກະຊົນ, ບໍລິສັດໄຟຟ້ານໍ້າເທີນ **2** ຈໍາກັດ (NTPC) ໃນການປະກອບສ່ວນ ສະໜັບສະໜູນ ການສ້າງຕັ້ງສະຫານນີວິທະຍຸຊຸມຊົນໃໝ່ ຢູ່ເມືອງນາກາຍ, ແຂວງຄໍາມ່ວນ. ພາຍໃຕ້ຂໍ້ຕົກລົງການປະກອບສ່ວນນີ້, **NTPC** ໄດ້ຕົກລົງທີ່ຈະໃຫ້ເງິນຊ່ວຍເຫລືອທາງດ້ານການເງິນ ຈໍານວນ 120,000 ໂດລາສະຫະລັດ ໃນໄລຍະເວລາ **3** ປີ ພ້ອມກັບການຮ່ວມມືຈາກ UNDP 80,000 ໂດລາສະຫະລັດ.ໃນງານຄັ້ງນີ້, ມີຜູ້ຕາງໜ້າ ຈາກ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ທີມງານໂຄງການ ວິທະຍຸຊຸມຊົນ, ພະແນກແຜນການ ແລະ ການລົງທຶນ ແຂວງ ຄໍາມ່ວນ, ສະມາຊິກຄະນະກໍາ ມະການກອງ ທຶນພັດທະນານໍ້າເທີນ2, ອໍານາດການປົກຄອງເມືອງນາກາຍ, ພະນັກງານຂອງ ບໍລິສັດນໍ້າເທີນ2 (NTPC) ພ້ອມທັງພະນັກງານຂອງ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ໄດ້ເຂົ້າຮ່ວມເປັນສັກຂີພະຍານ.

ວິທະຍຸຊຸມຊົນແມ່ນການສື່ສານແບບສອງທາງ. ມັນບໍ່ພຽງແຕ່ສາມາດໃຫ້ຂໍ້ມູນ ທີ່ຈໍາເປັນສໍາລັບການພັດທະນາ ໃຫ້ແກ່ປະຊາຊົນທ້ອງຖິ່ນ, ແຕ່ມັນຍັງເປັນເຄື່ອງມືໃນການແລກປ່ຽນ ຄວາມຄິດ, ບັນຫາ, ຄວາມຮູ້, ແລະ ວັດທະນະທໍາ. ການທີ່ໄດ້ຮັບຂໍ້ມູນພຽງພໍ ສາມາດຊ່ວຍໃຫ້ພວກເຂົາເຈົ້າ ໃຊ້ຂໍ້ມູນເຫຼົ່ານັ້ນເພື່ອ ການຕັດສິນໃຈທີ່ດີກວ່າ. ກະຊວງ ຖະແຫຼງຂ່າວ, ວັດທະນະ ທໍາ ແລະ ທ່ອງທ່ຽວ ແມ່ນ ຜູ່ຈັດຕັ້ງປະຕິບັດຄູ່ຮ່ວມງານ ຂອງ ໂຄງການ ໂຄງການສົ່ງເສີມການມີສວ່ນຮ່ວມຂອງຊຸມຊົນໂດຍຜ່ານໂຄງການວິທະຍຸຊຸມຊົນ. ພາຍໃນ 10 ປີ ທີ່ຜ່ານມາ ອົງການ ສະຫະປະຊາຊາດ ເພື່ອການພັດທະນາ (UNDP) ຮ່ວມກັບ ກະຊວງ ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ໄດ້ໃຫ້ການສະໜັບສະໜູນສະຖານີວິທະຍຸຊຸມຊົນໃນ 8 ສະຖານີ ໃນ 8 ເມືອງ ໃນ 5 ແຂວງ ທົ່ວປະເທດ. ວິທະຍຸຊຸມຊົນນາກາຍ ຈະເປັນສະຖານີວິທະຍຸຊຸມຊົນ ແຫ່ງທີ 9 ຂອງ ສປປ ລາວ.

ໃນພິທີລົງນາມ, ທ່ານ. ໂອລີເວຍ ດີໄດຣ, ຜູ້ບໍລິຫານໃຫ່ຍຂອງບໍລິສັດ ນໍ້າເທີນ 2 (**NTPC**) ໄດ້ເນັ້ນ ໜັກເຖິງ ຄວາມສໍາ ຄັນຂອງວິທະຍຸສໍາລັບຊຸມຊົນ. ທ່ານ ໂອລີເວຍ ໄດ້ ກ່າວວ່າ “*ໂຄງການວິທະຍຸຊຸມຊົນ ຈະຊ່ວຍຊຸມຊົນ ກາຍເປັນຊຸມຊົນທີ່ເຂັ້ມແຂງດ້ວຍຕົວເອງໄດ້, ເຊິ່ງມັນສອດຄ່ອງ ກັບນະໂຍບາຍ ສາມສ້າງ. ດ້ວຍຄໍາເວົ້າຂອງ ເຂົາເຈົ້າເອງ, ປະຊາຊົນຈະສາມາດປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການພັດທະນາດ້ານຕ່າງໆ ຂອງ ພວກເຂົາເຈົ້າເອງ ເຊັ່ນວ່າ ການພັດທະນາທາງດ້ານ ສຸຂະພາບ, ການສຶກສາ, ຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ແລະ ການອະນຸລັກຊີວະນາໆພັນ. ວິທະຍຸຊຸມຊົນຈະເປັນ ເຄື່ອງມືທີ່ດີເລີດອັນໜຶ່ງ ໃນການສະໜັບສະໜູນ ຊຸມຊົນ*

*ໃນການປະເຊີນກັບ ສິ່ງທ້າທາຍຕ່າງໆ ໃນທ້ອງຖິ່ນ ແລະ ກໍ່ຍັງສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານໃຫ້ງ່າຍຂຶ້ນສຳລັບທຸກຄົນ.”*

ຜູ້ຕາງ ໜ້າ ຈາກ ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ທ່ານ ບຸນຣາບ ສຸລິໂຍ ຮອງຫົວໜ້າ ກົມສື່ມວນຊົນ ແລະ ທັງເປັນ ຜູ້ຈັດການ ໂຄງການວິທະຍຸຊຸມຊົນ ໄດ້ເວົ້າວ່າ “*ຂ້າພະເຈົ້າເຊື່ອຢ່າງຍິ່ງວ່າ ສາຍສຳພັນອັນໃໝ່ ເຊິ່ງຈະສ້າງຄວາມເປັນເຈົ້າການໃນທ້ອງຖິ່ນ ແລະ ຖ່າຍ ທອດຂໍ້ມູນຂ່າວສານ ອັນສຳຄັນໃຫ້ກັບປະຊາຊົນ ເຊິ່ງລວມທັງຊາວໜຸ່ມ, ແມ່ຍິງ, ກຸ່ມຊົນເຜົ່າ ແລະ ຄົນອື່ນທີ່ອາໄສຢູ່ເຂດຫ່າງໄກສອກຫຼີກ ແລະ ຊົນນະບົດ.*”

ຜູ້ຕາງໜ້າ ການອົງການສະຫະປະຊາຊາດ ເພື່ອພັດທະນາ (UNDP), ທ່ານນາງ ຣິກາດ້າ ຣິເກີ (Ricarda Rieger) ໄດ້ເໜັ້ນເຖິງຄວາມສຳຄັນ ຂອງການຂະຫຍາຍການເປັນຄູ່ຮ່ວມພັດທະນາ ເນື່ອງຈາກວ່ານີ້ແມ່ນ ໜຶ່ງ ໃນເປົ້າ ໝາຍການພັດທະນາແບບຍືນຍົງ ທີ່ລັດຖະບານແຫ່ງ ສປປ ລາວ ໄດ້ຮັບຮອງ ກັບ ສະມາຊິກອົງການສະຫະປະຊາຊາດອື່ນໆ. ທ່ານນາງ ຣິກາດ້າ ຣິເກີ (Ricarda Rieger) ກ່າວວ່າ "*ບໍລິສັດນໍ້າເທີນ ຟ (NTPC) ແມ່ນຄູ່ຮ່ວມມື ພາກເອກະຊົນທຳອິດ ໃນ ສປປ ລາວ ທີ່ໄດ້ລົງນາມ ເຫັນດີໃຫ້ການສະໜັບສະໜູນທາງດ້ານການ ເງິນຢ່າງ ເອື້ອເຟື້ອໃຫ້ ແກ່ໂຄງການວິທະຍຸຊຸມຊົນ ໃນການສ້າງສະຖານີວິທະຍຸຊຸມຊົນແຫ່ງໃໝ່*". ທ່ານນາງ ຣິກາດ້າ ຣິເກີ (Ricarda) ຍັງໄດ້ໃຫ້ຄຳເຫັນຕື່ມ ອີກວ່າ "*ນີ້ແມ່ນການພິສູດໃຫ້ແກ່ສາຍພົວພັນ ທີ່ຍາວນານ ແລະ ປະສົບຜົນສຳເລັດຂອງພວກເຮົາ ກັບ ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ໃນຫລາຍປີຜ່ານມາ, ແລະ ຫວັງວ່າໃນອະນາຄົດ ພວກເຮົາຈະສືບຕໍ່ຂະຫຍາຍສາຍພົວພັນອັນດີຍິ່ງໃຫ້ແໜ້ນແຟ້ນຍິ່ງຂຶ້ນ.*"

**ສຳລັບຂໍ້ມູນເພີ່ມເຕີມກະລຸນາຕິດຕໍ່:**


**ສົມລິດ ຄູນປະເສີດ**, ຜູ້ປະສານງານການສື່ສານ, ອົງການ ສະຫະປະຊາຊາດ ສປປ ລາວ
ອີເມລ: somlith.khounpaseuth@one.un.org
ໂທລະສັບ: 021 267 777
ມືຖື: 020 7771 1874

**ສິຣິໄຊ ພັນທະວົງສ໌**, ຜູ້ຮັບຜິດຊອບໂຄງການ, ຫນ່ວຍງານການປົກຄອງ, ອົງການ ສະຫະປະຊາຊາດ ເພື່ອການພັດທະນາ, ສປປ ລາວ
ອີເມລ: sirixai.phanthavongs@undp.org
ໂທລະສັບ: 021 267 732
ມືຖື: 020 9530 3501